# ປະທານປະເທດຊີ້ 5 ບັນຫາໃຫຍ່ໃຫ້ການເງິນແກ້ໄຂດ່ວນ



ທ່ານ ບຸນຍັງ ວໍລະຈິດ ເລຂາທິການໃຫຍ່, ປະທານປະເທດ ຊີ້ຖິງ 5 ບັນຫາໃຫຍ່ໃນຂະແໜງແຜນການ-ການລົງທຶນ ແລະ ຂະແໜງການເງິນກໍຄືຂົງເຂດເງິນຕາ, ທີ່ຍັງບໍ່ທັນບັນລຸຕາມແຜນການຍ້ອນບັນຫາຍຸ້ງຍາກຕ່າງໆ, ໃຫ້ຮີບແກ້ໄຂດ່ວນເພາະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແລະແຜນງົບປະມານປີ 2018 ຕ້ອງມີຄວາມສູ້ຊົນສູງສຸດ ແລະ ປະຕິບັດເຂັ້ມງວດຕາມແຜນທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ.

ຫ້າບັນຫາທີ່ວ່າຮີບດ່ວນແກ້ຄື:

1. ຕ້ອງກຳໃຫ້ໄດ້ສາເຫດທີ່ແທ້ຈິງຂອງຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນ. ສາເຫດພື້ນຖານພວກເຮົາຍັງບໍ່ສາມາດສ້າງລາຍຮັບພື້ນຖານທີ່ເຂັ້ມແຂງ ແລະ ຍືນຍົງຈາກຜູ້ປະກອບການພາຍໃນປະເທດ, ຜ່ານມາຍັງອາໄສການຂຸດຄົ້ນຊັບພະຍາກອນ ແລະ ຂາຍວັດຖຸດິບ; ອາໄສການຊ່ວຍເຫຼືອລ້າ ແລະ ການກູ້ຢືມໃນອັດຕາທີ່ເພີ່ມຂຶ້ນຕໍ່ເນື່ອງ; ຈາກພັນທະຫຼືຄ່າຝາກຫຼວງ, ຈາກບັນດາໂຄງການລົງທຶນໄລຍະຍາວ ແລະ ອື່ນໆເຊິ່ງເກືອບທັງໝົດແຫຼ່ງລາຍຮັບດັ່ງກ່າວ ບໍ່ສາມາດກາຍເປັນຖານລາຍຮັບອັນເຂັ້ມແຂງໃນປັດຈຸບັນ.

ສາເຫດຕົ້ນຕໍ ແມ່ນຍ້ອນການຄຸ້ມຄອງວຽກງານແຜນການ-ລົງທຶນ, ຄຸ້ມຄອງລາຍຮັບ-ລາຍຈ່າຍບໍ່ທັນດີບໍ່ທັນເຂັ້ມງວດ ໂດຍສະເພາະການລະເມີດວິໃນແຜນການ-ການເງິນຢ່າງກວ້າງຂວາງ, ໜັກໜ່ວງໃນເວລາອັນຍາວນານພໍສົມຄວນເຊັ່ນ: ການຕົກລົງໂຄງການລົງທຶນຂອງລັດຍັງບໍ່ຄຳນຶງເຖິງຄວາມສາມາດຊຳລະສະສາງຂອງງົບປະມານ; ການລົງທຶນໃສ່ໂຄງລ່າງພື້ນຖານຢ່າງກວ້າງຂວາງໃຫຍ່ໂຕແຕ່ບໍ່ຕິດພັນກັບການດຳເນີນໂຄງການລົງທຶນທີ່ຈະສ້າງແຫຼ່ງລາຍຮັບໂດຍກົງແກ່ງົບປະມານ, ປະປ່ອຍໃຫ້ມີສະພາບບັນດາໂຄງການລົງທຶນຂອງລັດມີມູນຄ່າສູງເກີນຄວາມຈິງຫລາຍເທົ່າ, ບວກກັບການລົງທຶນນອກແຜນຊະຊາຍແກ່ຍາວ, ພ້ອມກັນນັ້ນ ການທີ່ບໍ່ມີການແກ້ໄຂບັນຫາດ້ານລາຍຮັບຮົ່ວໄຫຼ, ຟຸມເຟືອຍລາຍຈ່າຍ, ຈ່າຍນອກແຜນ, ຈ່າຍເຂົ້າໂຄງການບໍ່ມີຕົວຕົນ, ໄດ້ສ້າງຄວາມຫາຍຍະນະຕໍ່ລະບົບການເງິນ-ງົບປະມານຂອງລັດກໍຄືຕໍ່ສະຖຽນລະພາບຂອງເສດຖະກິດມະຫາພາກນີ້ເປັນຈຸດອ່ອນທີ່ພວກເຮົາເອງສ້າງຂຶ້ນ.

2 ຈຸດສຸມທີ່ຕ້ອງເອົາໃຈໃສ່ນຳພາ-ບັນຊາເພື່ອຄວາມເຂັ້ມແຂງຂອງເສດຖະກິດມະຫາພາກຕິດພັນກັບການແກ້ໄຂການຂາດດຸນງົບປະມານ, ແກ້ໄຂໜີ້ສິນຂອງລັດ ແລະ ຮັກສາການເຕີບໂຕຂອງເສດຖະກິດໃຫ້ໄວຕໍ່ເນື່ອງແມ່ນ: ຕ້ອງປະຕິບັດການປະຢັດລາຍຈ່າຍບໍລິຫານແບບຮັດສາຍແອວຢ່າງຈິງຈັງຕື່ມອີກ, ກີດກັ້ນເດັດຂາດການສ້າງໜີ້ສິນນອກແຜນ, ປະຕິບັດການສຳລະສະສາງຕາມແຜນການຢ່າງເຂັ້ມງວດ, ກຳນົດແຜນການເຄື່ອນໄຫວວຽກງານຢູ່ພາຍໃນ ແລະ ຕ່າງປະເທດຢ່າງຮັດກຸມມີຈຸດສຸມ ແລະ ເກີດປະສິດທິຜົນຕົວຈິງ, ປັບປຸງລະບອບກົນໄກການບໍລິຫານໃຫ້ຮັດກຸມ, ແກ້ໄຂຊ່ອງວ່າງການຮົ່ວໄຫຼຂອງລາຍຮັບ, ຕັດຮອນການຟຸມເຟືອຍລາຍຈ່າຍ, ແກ້ໄຂເດັດຂາດຕໍ່ຜູ້ລະເມີດວິໃນແຜນການ-ການເງິນ, ການສວຍໃຊ້ໜ້າທີ່ກົດໜ່ວງຖ່ວງດຶງເພື່ອຕໍ່ລອງຜົນປະໂຫຍດຂອງເຈົ້າໜ້າທີ່ທຸກລະດັບຂັ້ນ.

ພ້ອມກັນນັ້ນ ຕ້ອງດຳເນີນການຄຸ້ມຄອງການເຄື່ອນໄຫວລົງທຶນຕົວຈິງໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ, ຮັບປະກັນຜົນປະໂຫຍດຂອງຜູ້ລົງທຶນຄຽງຄູ່ກັບການຮັບປະກັນຜົນປະໂຫຍດອັນຄົບຖ້ວນຂອງລັດ, ຮັບປະກັນວຽກເຮັດງານທຳ ແລະ ລາຍຮັບອັນຊອບທຳຕາມກົດໝາຍ ກໍຄືການພັດທະນາສີມືຂອງແຮງງານລາວ, ຖືອັນນີ້ເປັນໜຶ່ງໃນວິທີສຳຄັນຕົ້ນຕໍ ເພື່ອເພີ່ມລາຍຮັບຕົວຈິງຂອງປະຊາຊົນກໍຄືເພື່ອແກ້ໄຂຄວາມຫຍຸ້ງຍາກຂອງຄົວເຮືອນ.

3. ດຳເນີນການປັບປຸງໂຄງສ້າງຂອງບັນດາລັດວິສາຫະກິດເພື່ອຍົກປະສິດທິຜົນທາງທຸລະກິດໃຫ້ສູງຂຶ້ນ, ເພາະຄວາມຈິງ ຫລາຍໆວິສາຫະກິດຂອງພວກເຮົາເຄື່ອນໄຫວທຸລະກິດອ່ອນແອ, ປະສິດທິຜົນຍັງຕໍ່າ, ໜີ້ສິນສູງ ແລະ ຄຸມເຄືອ ແລະ ບໍ່ສາມາດແກ້ໄຂບັນດາບັນຫາທີ່ຊໍ້າເຮື້ອນີ້ດ້ວຍວິທີເກົ່າໆ, ເຖິງເວລາແລ້ວໃນປີ 2018 ນີ້ຕ້ອງມີການບຸກທະລຸໃນການແກ້ໄຂບັນຫານີ້; ລັດຖະບານຕ້ອງມີມາດຕະການຕົວຈິງ ເພື່ອແກ້ໄຂ, ປັບປຸງລັດວິສາຫະກິດ ທີ່ລັດຖືຮຸ້ນຮ້ອຍເປີເຊັນເປັນລັດຮຸ້ນສ່ວນກັບເອກະຊົນຕ່າງປະເທດ ຫລື ພາຍໃນປະເທດ, ຫັນລັດວິສາຫະກິດຮຸ້ນສ່ວນເອກະຊົນກາຍເປັນບໍລິສັດມະຫາຊົນຕາມມາດຖານສາກົນ-ການບໍລິຫານແບບສາກົນ, ແລະ ຍັງສາມາດມອບກິດຈະການທີ່ລົງທຶນຮ້ອຍເປີເຊັນໃຫ້ເອກະຊົນຊື້-ສຳປະທານຕາມກົດໝາຍເພື່ອໃຫ້ລັດຫລຸດຜ່ອນໜີ້ສິນໄປໃນໂຕ ຫລື ເພື່ອເຮັດໃຫ້ລັດມີເງິນສຳຮອງເພີ່ມຂຶ້ນ.

4. ຮີບຮ້ອນກຳນົດຄືນການແບ່ງງານ ແລະ ຄວາມຮັບຜິດຊອບລະຫວ່າງກະຊວງຕ່າງໆຂອງລັດຖະບານ ແລະ ແຕ່ລະຂັ້ນຢູ່ທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການລົງທຶນຂອງລັດ ກໍຄືການພິຈາລະນາຕົກລົງການທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ, ພ້ອມທັງຕໍ່ການດຳເນີນການຄຸ້ມຄອງລາຍຮັບ, ລາຍຈ່າຍງົບປະມານ, ເພື່ອທັງຮັບປະກັນການຈັດຕັ້ງປະຕິບັດມີຄວາມເອກະພາບ, ເປັນລະບົບເຂັ້ມແຂງແຕ່ເທິງລົງລຸ່ມ, ທັງຮັບປະກັນຄວາມເປັນເຈົ້າການສູງໃນການດຳເນີນວຽກງານໃນການຄວາມຮັບຜິດຊອບຂອງຕົນ, ບໍ່ເອື່ອຍອີງ ຫລື ໂຍນຄວາມຮັບຜິດຊອບໃຫ້ກັນ, ນີ້ຄືວຽກງານທີ່ຈຳເປັນແຖວໜ້າທີ່ລັດຖະບານຕ້ອງໄດ້ບັນຊາແກ້ໄຂເພື່ອເຮັດໃຫ້ການຄຸ້ມຄອງວຽກງານແຜນການ-ການເງິນ, ມີປະສິດທິພາບສູງຂຶ້ນ.

5. ຄະນະພັກ, ອົງການປົກຄອງແຕ່ລະຂັ້ນຕ້ອງເພີ່ມທະວີຄວາມຮັບຜິດຊອບການຊີ້ນຳ-ນຳພາວຽກງານແຜນການ ແລະ ການລົງທຶນ ແລະ ວຽກງານການເງິນ-ງົບປະມານໃຫ້ເຂັ້ມງວດ, ໂດຍສຸມໃສ່ການສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນຂອງຂະແໜງແຜນການ-ການລົງທຶນ ແລະ ຂະແໜງການເງິນທີ່ຕົນຮັບຜິດຊອບໃຫ້ມີຄວາມຈົງຮັກພັກດີ, ມີຈັນຍາບັນຮັກວິຊາຊີບ, ປະຕິບັດວິໃນທາງດ້ານແຜນການເງິນຢ່າງເຄັ່ງຄັດ. ຖືເອົາຜົນປະໂຫຍດຂອງປະເທດຊາດເປັນຫລັກ, ມີລະບົບກວດການ-ກວດກາທີ່ເຂັ້ມງວດ ແລະ ດຳເນີນຢ່າງເປັນປົກກະຕິ, ຮັບປະກັນຄວາມໂປ່ງໃສໃນທຸກຂັ້ນຕອນຂອງການປະຕິບັດ.